ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 09 ຫາ 13 ທັນວາ 2024



ກອງປະຊຸມຄະນະກຳມະການແຫ່ງຊາດ ເພື່ອສົ່ງເສີມກາເຟລາວ ປະຈຳປີ 2024

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້




# ກອງປະຊຸມຄະນະກຳມະການແຫ່ງຊາດ
## ເພື່ອສົ່ງເສີມກາເຟລາວ ປະຈຳປີ 2024

ໃນວັນທີ 28 ພະຈິກ 2024 ກະຊວງກະສິກຳ ແລະ ປ່າໄມ້, ໂດຍໄດ້ຮັບການສະໜັບສະໜູນຈາກ ໂຄງການ ກຣີນຄັບ (Green CUP) ໄດ້ຈັດກອງປະຊຸມຄະນະກຳມະການແຫ່ງຊາດ ເພື່ອສົ່ງເສີມກາເຟລາວ ປະຈຳປີ 2024 ຂຶ້ນ ທີ່ຫ້ອງປະຊຸມ ສູນວັດທະນາທຳແຂວງຫົວພັນ, ໂດຍໃຫ້ກຽດເປັນປະທານຂອງ ທ່ານ ປອ ລິນຄຳ ດວງສະຫວັນ ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ປະທານຄະນະກຳມະການແຫ່ງຊາດເພື່ອສົ່ງເສີມກາເຟລາວ, ໂດຍມີ ທ່ານຮອງເຈົ້າແຂວງໆຫົວພັນ, ທ່ານຮອງເຈົ້າແຂວງໆ ສາລະວັນ, ທ່ານຮອງລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ, ຫົວໜ້າ-ຮອງ

ພາບ-ຂ່າວໂດຍ: ພະແນກໂຄສະນາ ແລະ ຂ່າວສານ

ຫົວໜ້າກົມ, ຄະນະກຳມະການແຫ່ງຊາດເພື່ອສົ່ງເສີມກາເຟລາວ, ຜູ້ຕາງໜ້າອົງການ ຝຣັ່ງເພື່ອການພັດທະນາ (AFD), ສະຫະພາບເອີຣົບ (EU), ພ້ອມດ້ວຍພາກສ່ວນກ່ຽວຂ້ອງເຂົ້າຮ່ວມ, ຈຸດປະສົງຂອງກອງປະຊຸມຄັ້ງນີ້ ແມ່ນເພື່ອສະຫຼຸບຕີລາຄາຄືນການຈັດຕັ້ງປະຕິບັດວຽກງານການສົ່ງເສີມການຜະລິດກາເຟລາວແຕ່ປີ 2019 ຫາປີ 2023 ແລະ ວາງທິດທາງແຜນການສຳລັບປີ 2024-2025 ແລະ ໃນຕໍ່ໜ້າ. ທ່ານ ບຸນຈັນ ກົມບຸນຍະສິດ ຫົວໜ້າກົມປູກຝັງ ກະຊວງກະສິກຳ ແລະ ປ່າໄມ້ ຕາງໜ້າໃຫ້ກອງເລຂາ ຄະນະກຳມະການແຫ່ງຊາດ ເພື່ອສົ່ງເສີມກາເຟລາວ,ໄດ້ສະຫຼຸບຕີລາຄາວຽກງານ

ສົ່ງເສີມ ແລະ ຜະລິດກາເຟແຕ່ປີ 2019-2023 ແລະ ທິດທາງແຜນການ ປີ 2024-2025 ໂດຍໄດ້ຍົກໃຫ້ເຫັນສະພາບການຜະລິດ ແລະ ການຕະຫຼາດກາເຟຂອງ ສປປ ລາວ ໃນທົ່ວປະເທດ ມີ 11 ແຂວງ ທີ່ປູກກາເຟ ໃນນີ້ ພາກເໜືອ ມີ 7 ແຂວງ ຄື: ຜົ້ງສາລີ, ຫຼວງນ້ຳທາ, ອຸດົມໄຊ, ຫົວພັນ, ຫຼວງພະບາງ, ຊຽງຂວາງ ແລະ ໄຊສົມບູນ. ສ່ວນພາກໃຕ້ ມີ 4 ແຂວງ ຄື: ສາລະວັນ, ຈຳປາສັກ, ເຊກອງ ແລະ ອັດຕະປື; ຈຳນວນການສົ່ງອອກກາເຟ ປີ 2024 ສົ່ງອອກ 27.033 ໂຕນ ມູນຄ່າ 79 ລ້ານ ໂດລາສະຫະລັດ ລາຄາ ການສົ່ງອອກໝາກຊຽວ ປີ 2024 ກາເຟນ້ອຍ 2.411-6.272 ໂດລາສະຫະລັດ/ໂຕນ. ກາເຟກາງ 1,600-1,800 ໂດລາສະຫະລັດ/ໂຕນ; ເຊິ່ງເປັນພືດຍຸດທະສາດ ສ້າງລາຍຮັບເປັນອັນດັບທີ 5 ຂອງລາຍຮັບແຫ່ງຊາດ ສາມາດສ້າງລາຍຮັບໃຫ້ ຊາວສວນກາເຟ ຫຼາຍກວ່າ 25.000 ຄອບຄົວ, ສ້າງວຽກເຮັດງານທຳ ຫຼາຍກວ່າ 300.000 ຄອບຄົວ. ສຳລັບທິດທາງແຜນການປີ 2024-2025 ຈະສືບຕໍ່ສົມທົບກັບພະແນກການກະຊວງທີ່ກ່ຽວຂ້ອງ ແລະ ອົງການຈັດຕັ້ງສາກົນຄູ່ຮ່ວມພັດທະນາໃນການສ້າງແຜນສົ່ງອອກກາເຟລາວທີ່ມີຄຸນນະພາບໄປຕະຫຼາດສາກົນໃຫ້ນັບມື້ນັບຫຼາຍຂຶ້ນ ສົ່ງເສີມໃຫ້ຜູ້ປະກອບທຸລະກິດດ້ານການເຟໃຫ້ເຂົ້າເຖິງທຶນທີ່ມີດອກເບ້ຍຕ່ຳ, ນະໂຍບາຍດ້ານພາສີອາກອນ ແລະ ສິ່ງອຳນວຍຄວາມສະດວກອື່ນໆ ນຳສະເໜີຜົນໄດ້ຮັບ ແລະ ສິ່ງທ້າທາຍໃນວຽກງານຄຸ້ມຄອງສົ່ງເສີມກາເຟລາວໃຫ້ມີຄວາມຍືນຍົງເພື່ອສ້າງວຽກເຮັດງານທຳ ແລະ ລາຍຮັບທີ່ໝັ້ນຄົງໃຫ້ຊາວກະສິກອນເພື່ອປະກອບສ່ວນເຂົ້າໃນການພັດທະນາເສດຖະກິດສັງຄົມແຫ່ງຊາດໃຫ້ບັນລຸຕາມຄາດໝາຍທີ່ວາງໄວ້ໃນໂອກາດນີ້ຜູ້ເຂົ້າຮ່ວມຍັງໄດ້ປະກອບຄຳຄິດຄຳເຫັນແລກປ່ຽນບົດຮຽນຮ່ວມກັນ ໂດຍຍົກໃຫ້ເຫັນບັນຫາຄົງຄ້າງ ແລະ ໄດ້ເຫັນດີເອກະພາບໃນການຈັດຕັ້ງປະຕິບັດວຽກງານສົ່ງເສີມການຜະລິດກາເຟລາວໃຫ້ນັບມື້ມີຜົນໄດ້ຮັບ ແລະ ປະສິດທິຜົນດີຂຶ້ນເປັນກ້າວໆ.

ຕອນທ້າຍຂອງກອງປະຊຸມ ທ່ານປະທານຍັງໄດ້ເນັ້ນໜັກບາງບັນຫາຄືໃນຕໍ່ໜ້າໃຫ້ສືບຕໍ່ໂຄສະນາຍຸດທະສາດພັດທະນາກາເຟລາວໃຫ້ຜູ້ຜະລິດ ຜູ້ປະກອບການກາເຟໃຫ້ໄດ້ຮັບຮູ້ ແລະ ຈັດຕັ້ງປະຕິບັດຢ່າງກວ້າງຂວາງ ປັບປຸງຍຸດທະສາດດັ່ງກ່າວໃຫ້ມີຄວາມສອດຄ່ອງພ້ອມທັງກວດກາຕິດຕາມການຈັດຕັ້ງປະຕິບັດໃຫ້ເປັນປົກກະຕິ, ພ້ອມດຽວກັນນີ້ກໍ່ໃຫ້ພາກສ່ວນເອກະຊົນ ພາກສ່ວນຜູ້ປະກອບການຕ່າງໆ ໄດ້ດຳເນີນທຸລະກິດເພື່ອສືບຕໍ່ຊຸກຍູ້ຜະລິດ ສະມາຄົມ ແລະ ສະຫະກອນໃຫ້ມີຄວາມເຂັ້ມແຂງ ຮັບປະກັນລາຄາທີ່ເປັນທຳ ໃຫ້ຜູ້ປະກອບການກາເຟຂະໜາດນ້ອຍໄດ້ມີຄວາມເຂັ້ມແຂງທາງດ້ານເຕັກນິກວິຊາການສາມາດເຂົ້າເຖິງສິນເຊື່ອ, ຊຸກຍູ້ການພັດທະນາເຄື່ອງມື ແລະ ລະບົບການຕິດຕາມກວດກາຂໍ້ມູນ ກ່ຽວກັບກາເຟ, ພ້ອມທັງພັດທະນາການປົກປ້ອງສິດທິທາງປັນຍາຂອງຜະລິດຕະພັນກາເຟລາວ ແລະ ຍີ່ຫໍ້ຂອງກາເຟລາວເພື່ອໃຫ້ມີຄຸນນະພາບ ເພື່ອໂຄສະນາອອກສູ່ຕະຫຼາດສາກົນໄດ້ໃຫ້ນັບມື້ນັບຫຼາຍຂຶ້ນ.

ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສົງຄາມ
ທ່ານ ສີສະຫວາດ ທອນດາລາ

ບັນນາທິການ:
ທ່ານ ກິດຊະນະ ພົມມະຈັນ
ທ່ານ ໂຊລາ ສົມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ
ທ່ານ ນ. ຄຳແພງ ເກສອນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອຳນອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂາວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ້;